PA

16/6/2017

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------===000===-------

ທະນາຄານແຫ່ງ ສປປ ລາວ

ເລກທີ 06 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 14 ມິຖຸນາ 2017


ສຳນັກງານ ຄຄຊ
ຂາເຂົ້າ ເລກທີ 0630
ວັນທີ 15 JUN 2017
ໂທລະສັບ 021 217770


## ບົດສະຫຼຸບການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ ປະຈຳເດືອນ ພຶດສະພາ 2017 ແລະ ທິດທາງແຜນການໃນຕໍ່ໜ້າ

## ພາກທີ I

## ຕີລາຄາສະພາບການເຄື່ອນໄຫວວຽກງານທີ່ພົ້ນເດັ່ນຂອງທະນາຄານໃນໄລຍະຜ່ານມາ

### I. ວຽກງານການເມືອງ-ແນວຄິດ

ໃນໜຶ່ງເດືອນຜ່ານມາ, ສະພາບການເມືອງແນວຄິດຂອງສະມາຊິກພັກ-ພະນັກງານພາຍໃນຂະແໜງທະນາຄານ ມີຄວາມສະຫງົບປົກກະຕິ, ມີຄວາມອຸ່ນອ່ຽນທຸ່ນທ່ຽງ, ມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ-ລະບຽບວິໄນ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກ ແລະ ເອົາໃຈໃສ່ໃນການປະຕິບັດໜ້າທີ່ການເມືອງຂອງຕົນໄດ້ເປັນຢ່າງດີ ຊຶ່ງສາມາດສະຫຼຸບຕີລາຄາສະພາບການເຄື່ອນໄຫວທີ່ພົ້ນເດັ່ນຂອງ ທຫລ ປະຈຳເດືອນ ພຶດສະພາ 2017 ແລະ ທິດທາງແຜນການໃນເດືອນ ມິຖຸນາ 2017 ດັ່ງລາຍລະອຽດລຸ່ມນີ້:

### II. ສະພາບການເຄື່ອນໄຫວທີ່ພົ້ນເດັ່ນຂອງ ທຫລ.

- ໄດ້ເຂົ້າຮ່ວມກອງປະຊຸມຕ່າງໆ: ກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ປະຈຳເດືອນ ພຶດສະພາ 2017; ກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນ ພຶດສະພາ 2017; ກອງປະຊຸມທີມງານເສດຖະກິດຂອງລັດຖະບານ; ພິທີປິດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດຊຸດທີ VIII; ກອງປະຊຸມສຳມະນາແລກປ່ຽນບົດຮຽນໃນຫົວຂໍ້ "ສະພາບເສດຖະກິດໃນພາກພື້ນ ແລະ ບົດຮຽນຂອງປະເທດໄທກ່ຽວກັບການຄຸ້ມຄອງເສດຖະກິດມະຫາພາກ, ການລະດົມທຶນ ເພື່ອການພັດທະນາ ແລະ ການກະຕຸ້ນເສດຖະກິດໃນໄລຍະເສດຖະກິດຂະຫຍາຍຕົວ"; ເຂົ້າຮ່ວມກອງປະຊຸມປະຈຳປີ 2017 ຂອງທະນາຄານພັດທະນາອາຊີ ແລະ ກອງປະຊຸມອາຊຽນ + 3 ຢູ່ປະເທດ ຍີ່ປຸ່ນ;
- ສຳເລັດການຈັດກອງປະຊຸມຕ່າງໆ: ກອງປະຊຸມເຜີຍແຜ່ຍຸດທະສາດການພັດທະນາລະບົບສະຖາບັນການເງິນ-ເງິນຕາຂອງ ສປປ ລາວ ໄລຍະ 10 ປີ (2016-2025) ແລະ ວິໄສທັດຮອດປີ 2030 ຢູ່ນະຄອນຫຼວງວຽງຈັນ, ບັນດາສາຂາ ທຫລ ປະຈຳພາກ; ກອງປະຊຸມກະກຽມການດຳເນີນຊີວິດການເມືອງຂັ້ນປົວແງພັກຂອງຂະແໜງການທະນາຄານ ປີ 2017; ກອງປະຊຸມວຽກງານບັນຊີ ແລະ ການເງິນ ປະຈຳປີ 2016; ກອງປະຊຸມເປີດກວ້າງລະດົມຄວາມຄິດເຫັນຕໍ່ຮ່າງກົດໝາຍວ່າດ້ວຍລະບົບຊຳລະສະສາງແຫ່ງຊາດ; ກອງປະຊຸມຄະນະຄົ້ນຄວ້ານະໂຍບາຍສິນເຊື່ອ SME ການຜະລິດກະສິກຳ ແລະ ການຜະລິດສິນຄ້າ; ກອງປະຊຸມປຶກສາຫາລືກ່ຽວກັບວິທີການ ແລະ ມາດຕະການແກ້ໄຂບັນຫາບໍລິສັດພີເອັສ ແລະ ບັນດາບໍລິສັດທີ່ດຳເນີນທຸລະກິດບໍ່ສອດຄ່ອງກັບລະບຽບກົດໝາຍຂອງ ສປປ ລາວ; ກອງປະຊຸມສະຫຼຸບການເຄື່ອນໄຫວຂອງສະຫະກອນອອມຊັບ ທຫລ ປະຈຳປີ 2016 ແລະ ທິດທາງ ປະຈຳປີ 2017;

- ສຳເລັດການຈັດສຳມະນາຕ່າງໆ: ຈັດສຳມະນາໃນຫົວຂໍ້: "ທະນະບັດປອມ (ເງິນກີບ)" ແລະ "ແຜນພັດທະນາເພື່ອລະບົບການເງິນແບບດີຈິຕອລສຳລັບຕ່ອງໂສ້ຄຸນຄ່າຂອງພາກກະສິກຳ"; ຈັດຝຶກອົບຮົມໃນຫົວຂໍ້: "ຮູບແບບການໃຫ້ບໍລິການ ສຳລັບສະຖາບັນການເງິນຈຸລະພາກ; ການເຜີຍແຜ່ບົດແນະນຳກ່ຽວກັບການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີ ຂອງສະຫະພັນແມ່ຍິງ ທຫລ; ການເຜີຍແຜ່ໃນຫົວຂໍ້: "ຄວາມເຂົ້າໃຈພື້ນຖານກ່ຽວກັບການລົງທຶນກັບຮຸ້ນ"; ຈັດປາຖະກະຖາວັນກຳມະກອນ ຄົບຮອບ 131 ປີ; ຈັດພິທີສະເຫຼີມສະຫຼອງວັນເດັກນ້ອຍສາກົນ ແລະ ວັນປູກຕົ້ນໄມ້ແຫ່ງຊາດ;

- ສຳເລັດການເຂົ້າຮ່ວມບໍລິຈາກເລືອດ ເນື່ອງໃນໂອກາດວັນສ້າງຕັ້ງອົງການກາແດງສາກົນ ຄົບຮອບ 154 ປີ ແລະ ເຂົ້າຮ່ວມຂະບວນການຍ່າງເພື່ອສຸຂະພາບ ເນື່ອງໃນໂອກາດສະເຫຼີມສະຫຼອງວັນກຳມະກອນ ຄົບຮອບ 131 ປີ;

- ສຳເລັດການຕ້ອນຮັບ ແລະ ເຂົ້າພົບປະຈາກ ທ່ານ ເອກອັກຄະລັດຖະທູດ ອັງກິດ ປະຈຳ ສປປ ລາວ; ທ່ານ ຮອງຜູ້ຊ່ວຍລັດຖະມົນຕີ ຫ້ອງການຕ້ານຢາເສບຕິດ ແລະ ປະຕິບັດກົດໝາຍສາກົນຂອງກະຊວງການຕ່າງປະເທດ ສ. ອາເມລິກາ; ຄະນະປະເມີນຜົນເສດຖະກິດມະຫາພາກຂອງກອງທຶນການເງິນສາກົນ.

## III. ສະພາບພົ້ນເດັ່ນການເຄື່ອນໄຫວວຽກງານວິຊາສະເພາະ

ໃນ 1 ເດືອນຜ່ານມາ, ທະນາຄານແຫ່ງ ສປປ ລາວ ໄດ້ເອົາໃຈໃສ່ຕິດຕາມສະພາບເສດຖະກິດສາກົນ; ຕະຫຼາດເງິນຕາພາຍໃນ; ການຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ; ການເຄື່ອນໄຫວຊຳລະສະສາງ ແລະ ການຊື້-ຂາຍພັນທະບັດ; ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບຢ່າງເປັນປົກກະຕິ ໂດຍມີສະພາບຄ່ອງດີ ເຊິ່ງສະແດງອອກຄື:

### 1. ສະພາບເສດຖະກິດເງິນຕາສາກົນ.

- ໃນເດືອນ 5/2017, ສະພາບເສດຖະກິດໂລກໂດຍລວມຂະຫຍາຍຕົວດີຂຶ້ນ ເຫັນໄດ້ຈາກຕົວເລກການຄາດຄະເນເສດຖະກິດໂລກ ຂອງກອງທຶນການເງິນສາກົນ (IMF) ຊຶ່ງຄາດວ່າຈະຂະຫຍາຍຕົວເພີ່ມຂຶ້ນ ຈາກ 0,1% ມາຢູ່ໃນລະດັບ 3,5% ໃນປີນີ້ ເນື່ອງຈາກຕະຫຼາດການເງິນຍັງມີຄວາມເຂັ້ມແຂງ ແລະ ການຟື້ນຕົວໃນພາກການຜະລິດ ແລະ ການຄ້າ ຈະຊ່ວຍສະໜັບສະໜູນແນວໂນ້ມເສດຖະກິດໃຫ້ດີຂຶ້ນ ເຖິງແມ່ນວ່າເສດຖະກິດຂອງບັນດາປະເທດທີ່ພັດທະນາແລ້ວ ຈະປະເຊີນກັບບັນຫາການຫຼຸດລົງຂອງພາກການຜະລິດກໍ່ຕາມ;

- ເງິນໂດລາອ່ອນຄ່າ 1,33% ທຽບເອີໂຣ ເນື່ອງຈາກຕົວເລກເສດຖະກິດຂອງ ສ.ອາເມລິກາ ອອກມາບໍ່ດີເປັນຕົ້ນຕົວເລກການຂະຫຍາຍຕົວຂອງເສດຖະກິດຄາດວ່າຈະຂະຫຍາຍຕົວ 0,7% ໃນໄຕມາດ 1/2017 ຊຶ່ງຕ່ຳກວ່າທີ່ຄາດຄະເນໃນໄລຍະຜ່ານມາໃນລະດັບ 1,2%, ດັດຊະນີຄວາມເຊື່ອໝັ້ນຜູ້ບໍລິໂພກ ຫຼຸດລົງ ເປັນ 120,3 ຈຸດ ໃນເດືອນ 4/2017 ຈາກ 124,9 ຈຸດ ໃນເດືອນຜ່ານມາ ແລະ ຕົວເລກການສັ່ງຊື້ສິນຄ້າທີ່ໃຊ້ທົນ ເພີ່ມຂຶ້ນພຽງແຕ່ 0,7% ໃນເດືອນ 3/2017 ຈາກເພີ່ມຂຶ້ນ 2,3% ໃນເດືອນຜ່ານມາ;

- ລາຄານ້ຳມັນຫຼຸດລົງ 2,30% ຈາກ 50,78 ໂດລາ/ບາເຣວ ມາເປັນ 49,61 ໂດລາ/ບາເຣວ ເນື່ອງຈາກການສະໜອງນ້ຳມັນຂອງກຸ່ມ OPEC ແລະ Non-OPEC ຍັງຢູ່ໃນລະດັບສູງກວ່າຄວາມຕ້ອງການ ບວກກັບສຳນັກງານພະລັງງານສາກົນ (EIA) ຄາດຄະເນການຜະລິດນ້ຳມັນຂອງ ສ.ອາເມລິກາ ຈະເພີ່ມຂຶ້ນ 0,12 ລ້ານບາເຣວ ຈາກໃນລະດັບ 5,07 ລ້ານບາເຣວ/ວັນ ມາເປັນ 5,19 ລ້ານບາເຣວ/ວັນ ໃນເດືອນ 5/2017. ສ່ວນລາຄາຄຳ ເພີ່ມຂຶ້ນ 0,80% ຈາກ 1.244,34 ໂດລາ/ອອນ ມາເປັນ 1.254,29 ໂດລາ/ອອນ ເນື່ອງຈາກນັກລົງທຶນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳເພື່ອເກງກຳໄລ ແລະ ປ້ອງກັນຄວາມສ່ຽງຈາກການຜັນຜວນຂອງເສດຖະກິດ.

### 2. ສະພາບເງິນຕາພາຍໃນ.

– ອັດຕາເງິນເຟີ້ປະຈຳເດືອນ 05/2017 (ຕົວເລກຄາດຄະເນ) ຢູ່ໃນລະດັບ 1,31%;

– ຖານເງິນຕາປະຈຳເດືອນ 05/2017 ເພີ່ມຂຶ້ນ 614,53 ຕື້ກີບ ຫຼື 1,70% ທຽບໃສ່ເດືອນ 04/2017, ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 25,62%. ປະລິມານເງິນ M2 ຫຼຸດລົງ 10,51 ຕື້ກີບ ຫຼື 0,01% ທຽບໃສ່ເດືອນ 04/2017 ເນື່ອງຈາກມີການໂອນຊຳລະໜີ້ຢູ່ຕ່າງປະເທດຂອງລັດຖະບານ, ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 10.551,09 ຕື້ກີບ ຫຼື 16,57%;

- ອັດຕາແລກປ່ຽນທີ່ວລະບົບໃນເດືອນ 5/2017 ທຽບເດືອນ 4/2017 ເໜັງຕີງໃນຂອບທີ່ກຳນົດໄວ້ເຫັນໄດ້ຈາກເງິນກີບແຂງຄ່າ 0,25% ທຽບເງິນໂດລາ ແຕ່ອ່ອນຄ່າ 1,18% ທຽບເງິນບາດ. ຖ້າສົມທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບແຂງຄ່າ 0,14% ທຽບກັບເງິນໂດລາ ແຕ່ອ່ອນຄ່າ 3,13% ທຽບເງິນບາດ;

- ມູນຄ່າການຊື້-ຂາຍເງິນຕາຕ່າງປະເທດປະຈຳເດືອນ 05/2017 (11/4-11/05/2017) ເຫັນວ່າມູນຄ່າການຊື້-ຂາຍເງິນຕາຕ່າງປະເທດ ຫຼຸດລົງ 2,96% ຖ້າທຽບໃສ່ເດືອນ 4/2017. ທທກ ຂາຍເງິນຕາຕ່າງປະເທດ ສຸດທິ 10,01 ລ້ານໂດລາສະຫະລັດທຽບເທົ່າ (ໃນນັ້ນ ຂາຍເງິນບາດສຸດທິ 5.215,96 ລ້ານບາດ ຫຼື 162,64 ລ້ານໂດລາສະຫະລັດທຽບເທົ່າ, ແຕ່ຊື້ເງິນໂດລາສຸດທິ 152,63 ລ້ານໂດລາສະຫະລັດ). ໃນນັ້ນ ທຫລ ໄດ້ດຸນດ່ຽງຂາຍເງິນຕາຕ່າງປະເທດໃຫ້ ທທກ ສຸດທິ 6,72 ລ້ານໂດລາສະຫະລັດທຽບເທົ່າ (ໃນນັ້ນ ຂາຍເງິນໂດລາສຸດທິ 6,10 ລ້ານໂດລາສະຫະລັດ ແລະ ຂາຍເງິນບາດສຸດທິ 20 ລ້ານບາດ ຫຼື 0,62 ລ້ານໂດລາສະຫະລັດທຽບເທົ່າ). ປະລິມານການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນ ຈຳນວນ 29,78 ລ້ານໂດລາສະຫະລັດທຽບເທົ່າ (ໃນນີ້ປະລິມານຊື້-ຂາຍເງິນໂດລາສະຫະລັດ 19,31 ລ້ານໂດລາສະຫະລັດ ແລະ ເງິນບາດ 335,73 ລ້ານບາດ ຫຼື 10,47 ລ້ານໂດລາສະຫະລັດ);

- ດຸນການຊຳລະກັບຕ່າງປະເທດປະຈຳເດືອນ 05/2017 (11/04-11/05/2017) ໄດ້ມີກະແສເງິນໄຫຼອອກຜ່ານລະບົບທະນາຄານສຸດທິ 27,85 ລ້ານໂດລາສະຫະລັດ. ໃນນັ້ນ, ກະແສເງິນໄຫຼອອກ ຈຳນວນ 704,57 ລ້ານໂດລາສະຫະລັດ ຊຶ່ງສ່ວນໃຫຍ່ມາຈາກການຊຳລະຄ່າສິນຄ້ານຳເຂົ້າຂອງວິສາຫະກິດ ຈຳນວນ 402,42 ລ້ານໂດລາສະຫະລັດ ແລະ ຊຳລະເງິນກູ້ຢືມຈາກຕ່າງປະເທດຂອງພາກລັດຖະບານ ຈຳນວນ 29,04 ລ້ານໂດລາສະຫະລັດ ແລະ ພາກສ່ວນທະນາຄານທຸລະກິດ ຈຳນວນ 188,50 ລ້ານໂດລາສະຫະລັດ. ສ່ວນກະແສເງິນໄຫຼເຂົ້າ ຈຳນວນ 676,72 ລ້ານໂດລາສະຫະລັດ ສ່ວນໃຫຍ່ແມ່ນຮັບຈາກການສົ່ງອອກສິນຄ້າຂອງວິສາຫະກິດ ຈຳນວນ 278,33 ລ້ານໂດລາສະຫະລັດ, ເງິນລົງທຶນໂດຍກົງຈາກຕ່າງປະເທດ ຈຳນວນ 158,59 ລ້ານໂດລາສະຫະລັດ, ເງິນກູ້ຢືມຈາກຕ່າງປະເທດຂອງທະນາຄານທຸລະກິດ ຈຳນວນ 4.005,80 ລ້ານບາດ ຫຼື 115,92 ລ້ານໂດລາສະຫະລັດທຽບເທົ່າ.

## 3. <u>ການລະດົມເງິນຝາກ ແລະ ການປ່ອຍສິນເຊື່ອ</u>

- ການລະດົມເງິນຝາກຂອງທະນາຄານທຸລະກິດ: ຮອດວັນທີ 11/05/2017 (ຕົວເລກເບື້ອງຕົ້ນ) ທະນາຄານທຸລະກິດມີຍອດເງິນຝາກທັງໝົດ 64.497,72 ຕື້ກີບ ເມື່ອທຽບໃສ່ເດືອນຜ່ານມາ ເພີ່ມຂຶ້ນ 1,04%. ເງິນຝາກເປັນເງິນກີບເພີ່ມຂຶ້ນ 1,36% ເມື່ອທຽບໃສ່ເດືອນຜ່ານມາ ຊຶ່ງກວມເອົາ 47,83% ຂອງຍອດເງິນຝາກທັງໝົດ ແລະ ເງິນຝາກເປັນເງິນຕາຕ່າງປະເທດ ຫຼຸດລົງ 0,76% ຊຶ່ງກວມເອົາ 52,17% ຂອງເງິນຝາກທັງໝົດ.

- ການປ່ອຍສິນເຊື່ອຂອງທະນາຄານທຸລະກິດ: ຮອດວັນທີ 11/05/2017 (ຕົວເລກເບື້ອງຕົ້ນ) ຍອດເຫຼືອສິນເຊື່ອທັງໝົດ 61.452,54 ຕື້ກີບ ຫຼຸດລົງ 0,28% ເມື່ອທຽບໃສ່ເດືອນຜ່ານມາ. ສິນເຊື່ອເປັນເງິນກີບ ກວມເອົາ 48,20% ຂອງສິນເຊື່ອທັງໝົດ ແລະ ສິນເຊື່ອເປັນເງິນຕາຕ່າງປະເທດ ກວມເອົາ 51,80% ຂອງສິນເຊື່ອທັງໝົດ.

- ທະນາຄານນະໂຍບາຍ ປ່ອຍສິນເຊື່ອທັງໝົດ 34,95 ຕື້ກີບ ທຽບໃສ່ເດືອນຜ່ານມາເພີ່ມຂຶ້ນ 176,94%, ເກັບຕົ້ນທຶນໄດ້ 33,06 ຕື້ກີບ ທຽບໃສ່ເດືອນຜ່ານມາ ຫຼຸດລົງ 7,36% (ສິນເຊື່ອທັງໝົດທີ່ປ່ອຍໄປສ່ວນໃຫຍ່ແມ່ນໄດ້ສຸມໃສ່ຂະແໜງກະສິກຳ-ປ່າໄມ້, ການຄ້າ ແລະ ປະກອບວັດຖຸເຕັກນິກ). ຍອດສິນເຊື່ອຮອດທ້າຍເດືອນ 05/2017 ມີຈຳນວນ 2.901,56 ຕື້ກີບ ເທົ່າກັບ 87,17% ຂອງແຜນການ (3.328,31 ຕື້ກີບ). ໃນນີ້ສິນເຊື່ອຢູ່ເມືອງເປົ້າໝາຍ 1.905,37 ຕື້ກີບ, ຈຸດສຸມລັດຖະບານ-ທ້ອງຖິ່ນ 279,20 ຕື້ກີບ, ບ້ານເຮັດທົດລອງ 3 ສ້າງ 285,02 ຕື້ກີບ ແລະ ໂຄງການຜະລິດເປັນສິນຄ້າ 431,97 ຕື້ກີບ.

## 4. <u>ການເຄື່ອນໄຫວຊຳລະສະສາງ ແລະ ການຊື້-ຂາຍພັນທະບັດ</u>

### 4.1. <u>ການເຄື່ອນໄຫວຊຳລະສະສາງ</u>

ການຊຳລະສະສາງດ້ວຍແຊັກຜ່ານສູນຊຳລະສະສາງໃນເດືອນນີ້ ມີຈຳນວນ 4.062 ສະບັບ ເພີ່ມຂຶ້ນ 22,42% ເປັນເງິນຈຳນວນ 2.016,64 ຕື້ກີບ ເພີ່ມຂຶ້ນ 18,96% ເມື່ອທຽບໃສ່ເດືອນຜ່ານມາ. ການໂອນເງິນທາງໂທລະສານແບບ

ມີມູນຄ່າສູງໃນເດືອນນີ້ມີຈຳນວນ 128 ຄັ້ງ ຫຼຸດລົງ 6,56% ເມື່ອທຽບໃສ່ເດືອນຜ່ານມາ ມີມູນຄ່າການໂອນ 630,11 ຕື້ກີບ ຫຼຸດລົງ 15,13% ເມື່ອທຽບໃສ່ເດືອນຜ່ານມາ; ສຳລັບການໂອນເງິນຜ່ານລະບົບຊຳລະສະສາງມູນຄ່າສູງ (RTGS) ແຕ່ວັນທີ 25/04-24/05/2017 ມີຈຳນວນ 13.117 ຄັ້ງ ລາຍລະອຽດມີດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວ 12.729 ຄັ້ງ ມີມູນຄ່າການໂອນ 5.078,23 ຕື້ກີບ ເພີ່ມຂຶ້ນ 27,39% ເມື່ອທຽບໃສ່ເດືອນຜ່ານມາ. ໃນນີ້, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 3.530 ຄັ້ງ. ໃນນັ້ນ ມີ 43 ພາກສ່ວນທີ່ເຮັດທຸລະກຳ (ທຫລ, ທະນາຄານທຸລະກິດ 38 ແຫ່ງ, ຕະຫຼາດຫຼັກຊັບ, LAPS, BCONEX ແລະ ກະຊວງການເງິນ);
- **ກະຊວງການເງິນ:** ມີການເຄື່ອນໄຫວ ຈຳນວນ 388 ຄັ້ງ ມີມູນຄ່າການໂອນ 577,24 ຕື້ກີບ;
- **ສະກຸນເງິນໂດລາສະຫະລັດ ແລະ ເງິນບາດ:** ບໍ່ມີການເຄື່ອນໄຫວ.

**4.2 ການຊື້-ຂາຍພັນທະບັດ**

- ໃນເດືອນ 05/2017 ພັນທະບັດກະຊວງການເງິນບ້ວງລະດົມທຶນ ຜ່ານ ທຫລ (ບ້ວງ ທຫລ ບໍ່ຄ້ຳປະກັນ) ມີການຈຳໜ່າຍ 179 ຕື້ກີບ ຊຶ່ງປະກອບດ້ວຍ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ 169 ຕື້ກີບ ແລະ ກອງທຶນປົກປ້ອງຜູ້ຝາກເງິນ 10 ຕື້ກີບ ແລະ ໄດ້ໄຖ່ຖອນພັນທະບັດຄືນ 15 ຕື້ກີບ ໃນນັ້ນ, ໄຖ່ຖອນໃຫ້ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ 10 ຕື້ກີບ ແລະ ກອງທຶນປົກປ້ອງຜູ້ຝາກເງິນ 5 ຕື້ກີບ;
- ພັນທະບັດຂອງກະຊວງການເງິນ ມີຍອດເຫຼືອທັງໝົດ 3 ບ້ວງ ມູນຄ່າ 5.316 ຕື້ກີບ ແລະ 90 ລ້ານໂດລາສະຫະລັດ (ບ້ວງລະດົມທຶນ ທທກ ໂດຍກົງ 154 ຕື້ກີບ ແລະ 90 ລ້ານໂດລາສາຫະລັດ, ພັນທະບັດບ້ວງລ້າງໜີ້ 2.678 ຕື້ກີບ, ບ້ວງລະດົມທຶນຈາກ ທທກ ປະມູນຜ່ານ ທຫລ 2.484 ຕື້ກີບ);
- ສຳລັບພັນທະບັດທະນາຄານແຫ່ງ ສປປ ລາວ ໃນເດືອນ 05/2017 ບໍ່ມີການເຄື່ອນໄຫວ, ປະຈຸບັນມີຍອດເຫຼືອພັນທະບັດທີ່ຍັງບໍ່ໄຖ່ຖອນທັງໝົດ 354 ລ້ານໂດລາສະຫະລັດ.

**5. ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ**

- ດັດຊະນີຕະຫຼາດຫຼັກຊັບລາວໃນເດືອນນີ້ປິດຢູ່ທີ່ 1.016, 88 ຈຸດ ຫຼຸດລົງ 1,90% ເມື່ອທຽບໃສ່ເດືອນຜ່ານມາ, ມີປະລິມານຊື້-ຂາຍຮຸ້ນທັງໝົດ 37,72 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 273,74 ຕື້ກີບ ເພີ່ມຂຶ້ນ 3.407,51% ທຽບໃສ່ເດືອນຜ່ານມາ ເນື່ອງຈາກມີການປັບປຸງຜູ້ຖືຮຸ້ນລາຍໃຫຍ່ຂອງບໍລິສັດລາວເວີນ ມະຫາຊົນ, ໂດຍເປັນຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 70,49% ຂອງມູນຄ່າການຊື້-ຂາຍທັງໝົດ;
- ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 5.130 ກີບ/ຮຸ້ນ ຫຼຸດລົງ 170 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 670.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 3,44 ຕື້ກີບ ເພີ່ມຂຶ້ນ 26,06 % ເມື່ອທຽບໃສ່ເດືອນຜ່ານມາ, ໂດຍເປັນຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 77,66% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ;
- ຮຸ້ນຂອງບໍລິສັດຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 5.093 ກີບ/ຮຸ້ນ ຫຼຸດລົງ 267 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 1.242.600 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 6,32 ຕື້ກີບ ເພີ່ມຂຶ້ນ 52,84% ເມື່ອທຽບໃສ່ເດືອນຜ່ານມາ, ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 43,91% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ;
- ຮຸ້ນຂອງບໍລິສັດລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 7.400 ກີບ/ຮຸ້ນ ຫຼຸດລົງ 1.700 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 36.618.100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 263,57 ຕື້ກີບ, ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 49,97% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ LWPC ທັງໝົດ;
- ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 2.000 ກີບ/ຮຸ້ນ ເພີ່ມຂຶ້ນ 77 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 182.800 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ

365,64 ລ້ານກີບ ເພີ່ມຂຶ້ນ 741,52% ທຽບໃສ່ເດືອນຜ່ານມາ, ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 95,65% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ;

- ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາຊື້-ຂາຍສະເລ່ຍ 2.880 ກີບ/ຮຸ້ນ ຫຼຸດລົງ 63 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 12.200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 35,14 ລ້ານກີບ ເພີ່ມຂຶ້ນ 1.606,83% ທຽບໃສ່ເດືອນຜ່ານມາ, ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 30,12% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ SVN ທັງໝົດ.

6. <u>ວຽກງານອື່ນໆ</u>

– ໄດ້ອະນຸຍາດໃຫ້ທະນາຄານທຸລະກິດ ນຳເງິນເຂົ້າ ສປປ ລາວ ຈຳນວນ 272,36 ລ້ານໂດລາສະຫະລັດທຽບເທົ່າ, ຫຼຸດລົງ 15%. ໃນນີ້ມີເງິນໂດລາສະຫະລັດ ຈຳນວນ 136,74 ລ້ານໂດລາສະຫະລັດກວມເອົາ 99,78% ແລະ 4,65 ຕື້ບາດ. ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 466,19 ລ້ານໂດລາສະຫະລັດທຽບເທົ່າ ເພີ່ມຂຶ້ນ 40% ທຽບໃສ່ເດືອນຜ່ານມາ. ໃນນີ້ມີເງິນໂດລາສະຫະລັດ ຈຳນວນ 400,43 ລ້ານໂດລາສະຫະລັດກວມເອົາ 86% ຂອງເງິນທັງໝົດ; 2,22 ຕື້ບາດ; 0,65 ລ້ານເອີໂຣ; 11.550 ຝຣັ່ງສະວິດ; 5.245 ປອນສະເຕລິງ; 5,76 ລ້ານເຢັນ; 26.160 ໂດລາແຄນນາດາ; 35.945 ໂດລາອົດສະຕາລີ; 102 ໂດລາສິງກະໂປ ແລະ 33 ລ້ານດົ່ງ;

– ວຽກງານຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ: ສຳເລັດການອອກໃບອະນຸຍາດສ້າງຕັ້ງທະນາຄານບູຍອງລາວ ຈຳກັດ ສາຂາດອນໜູນ; ສຳເລັດການຄົ້ນຄວ້າ ແລະ ຮັບຮອງຄູ່ມືການກວດກາປະຫວັດຂອງຜູ້ຖືຮຸ້ນ, ຜູ້ບໍລິຫານ, ແລະ ແຫຼ່ງທຶນສ້າງຕັ້ງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຢູ່ ສປປ ລາວ; ສຳເລັດການລົງກວດກາທະນາຄານເອເອັນແຊັດລາວ ຈຳກັດ ປະຈຳປີ 2016; ສຳເລັດການມອບໃບອະນຸຍາດດຳເນີນທຸລະກິດຖາວອນໃຫ້ແກ່ບໍລິສັດເຊົ່າສິນເຊື່ອ ເຄທີພີ ຈຳກັດ ແລະ ສກຈບ ຈະເລີນຊັບ; ສຳເລັດການອອກແຈ້ງການໂຈະຊົ່ວຄາວການອອກອະນຸຍາດດຳເນີນທຸລະກິດ ສະຖາບັນການເງິນເພື່ອເງື່ອນໄຂໃນການຄົ້ນຄວ້າອອກອະນຸຍາດດຳເນີນທຸລະກິດ ສະຖາບັນການເງິນ;

– ສຳເລັດຄົ້ນຄວ້າການອອກບົດແນະນຳການຈັດຕັ້ງປະຕິບັດມາດຕະຖານບັນຊີສາກົນ IAS21;

– ໄດ້ຮັບເງິນປອມ ແລະ ອອກໃບຢັ້ງຢືນເງິນປອມ 2 ສະບັບໃຫ້ທະນາຄານພັດທະນາລາວ ແລະ ກົມຕຳຫຼວດເສດຖະກິດ ມີປະເພດໃບ 50.000 ກີບ ຈຳນວນ 2 ໃບ ແລະ ຮັບຈາກປະຊາຊົນ ປະເພດໃບ 100 ໂດລາສະຫະລັດ ຈຳນວນ 1 ໃບ;

– ໄດ້ຮັບສຳນວນທຸລະກຳທີ່ໜ້າສົງໄສວ່າເປັນການຟອກເງິນ (STR) ຈາກທະນາຄານທຸລະກິດຈຳນວນ 17 ສະບັບ ເຊິ່ງຮອດປະຈຸບັນ STR ລວມທັງໝົດມີ 574 ສະບັບ.

## <u>ພາກທີ II</u>
## <u>ວຽກງານຈຸດສຸມໃນເດືອນຕໍ່ໄປ</u>

– ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນດັ່ງທີ່ໄດ້ກຳນົດໄວ້ໃນແຜນງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ, ຄວບຄຸມປະລິມານເງິນ ແລະ ຮັບປະກັນລະບົບການຊຳລະສະສາງໃຫ້ຄ່ອງຕົວ, ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານເພື່ອຮັບປະກັນສະຖຽນລະພາບທາງດ້ານການເງິນ, ຊຸກຍູ້ການເຄື່ອນໄຫວຕະຫຼາດລະຫວ່າງທະນາຄານ; ສືບຕໍ່ຕິດຕາມສະພາບອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນໃຫ້ຢູ່ໃນຂອບເຂດທີ່ກຳນົດໄວ້, ຄວບຄຸມປັດໄຈຕ່າງໆ ທີ່ຈະກະທົບໃຫ້ເກີດເງິນເຟີ້; ເອົາໃຈໃສ່ບໍລິຫານຄັງສຳຮອງເງິນຕາຕ່າງປະເທດໃຫ້ໄດ້ຕາມແຜນທີ່ກຳນົດໄວ້;

– ກະກຽມທຸກເງື່ອນໄຂ ເພື່ອກະກຽມກອງປະຊຸມດຳເນີນຊີວິດການເມືອງປັບປຸງປົວແປງພັກ ຢູ່ອົງຄະນະພັກ ທຫລ ທີ່ຈະຈັດຂຶ້ນໃນກາງເດືອນ ມິຖຸນາ 2017 ທີ່ຈະມາເຖິງນີ້;

– ສືບຕໍ່ສະຫຼຸບລາຍງານການກວດກາການຈັດຕັ້ງປະຕິບັດແຜນງານ-ໂຄງການຂອງ ທຫລ ປະຈຳປີ 2016;

– ສືບຕໍ່ສະຫຼຸບ ສັງລວມ ບັນດາມະຕິ, ຄຳສັ່ງ, ດຳລັດ ແລະ ຂໍ້ຕົກລົງຂອງລັດຖະບານທີ່ຕິດພັນກັບຂະແໜງການທະນາຄານ;

– ສືບຕໍ່ຄຸ້ມຄອງເງິນຕາຕ່າງປະເທດ, ສົ່ງເສີມການນຳໃຊ້ເງິນກີບ ແລະ ການຊຳລະໂດຍບໍ່ໃຊ້ເງິນສົດ, ເກັບກຳສະພາບການຕິດລາຄາສິນຄ້າ ແລະ ບໍລິການຂອງບັນດາຕະຫຼາດ, ຫ້າງຮ້ານພາຍໃນນະຄອນຫຼວງວຽງຈັນ;

– ຊຸກຍູ້ບັນດາທະນາຄານທຸລະກິດເພີ່ມທະວີການລະດົມເງິນຝາກດ້ວຍຫຼາຍຮູບຫຼາຍສີ ໂດຍສະເພາະເງິນຝາກໄລຍະຍາວທີ່ເໝາະສົມສອດຄ່ອງກັບຄວາມຕ້ອງການຕົວຈິງຂອງສັງຄົມ ໄປຄຽງຄູ່ກັບການປັບປຸງການບໍລິການຂອງຕົນໃຫ້ມີຄວາມສະດວກວ່ອງໄວ ແລະ ທັນໄປສູ່ຄວາມເປັນທັນສະໄໝເທື່ອລະກ້າວ. ຊຸກຍູ້ການປັບອັດຕາດອກເບ້ຍໃຫ້ສອດຄ່ອງກັບສະພາບການພາຍໃນ ແລະ ສາກົນ. ຕິດຕາມການປ່ອຍສິນເຊື່ອຢ່າງໃກ້ຊິດ ແລະ ການປັບປຸງໂຄງສ້າງໜີ້ໃຫ້ແທດເໝາະ ເພື່ອຮັບປະກັນບໍ່ໃຫ້ເກີດໜີ້ເສຍເກີນ 3%;

– ສືບຕໍ່ຕິດຕາມການດັດແກ້ ແລະ ປັບປຸງລະບຽບພາຍໃນຂອງທະນາຄານຮ່ວມທຸລະກິດລາວ-ຫວຽດ ແລະ ທະນາຄານ ຊີໄອເອັມບີໄທ ຈຳກັດ ສາຂານະຄອນຫຼວງວຽງຈັນ; ສືບຕໍ່ລົງກວດກາ ທະນາຄານການຄ້າຕ່າງປະເທດລາວມະຫາຊົນ ປະຈຳປີ 2016; ຕິດຕາມຄວາມຄືບໜ້າການຮ່ວມທຶນລະຫວ່າງທະນາຄານພັດທະນາລາວ ກັບທະນາຄານຮຸ່ນສ່ວນອຸດສາຫະກຳ-ການຄ້າ ສສ ຫວຽດນາມ;

– ສືບຕໍ່ຕິດຕາມການສົ່ງບົດລາຍງານຖານະການເງິນຂອງບໍລິສັດກວດສອບພາຍນອກ ປະຈຳປີ 2016 ແລະ ການເຜີຍແຜ່ຖານະການເງິນຂອງທະນາຄານທຸລະກິດ; ຕິດຕາມ ແລະ ຊຸກຍູ້ທະນາຄານທຸລະກິດທີ່ໄດ້ສ້າງຕັ້ງຜ່ານມາໃຫ້ປະກອບເອກະສານໃຫ້ຄົບຖ້ວນຕາມຂໍ້ຕົກລົງເລກທີ 42/ທຫລ; ລົງວັນທີ 15/01/2016;

– ສືບຕໍ່ປັບປຸງນິຕິກຳຈຳນວນໜຶ່ງ ເປັນຕົ້ນ: ຂໍ້ຕົກລົງວ່າດ້ວຍການບໍລິການດ້ານການເງິນຜ່ານໂທລະສັບມືຖື; ຂໍ້ຕົກລົງວ່າດ້ວຍການປະຕິບັດຕໍ່ບັນຊີທີ່ບໍ່ມີການເຄື່ອນໄຫວຢູ່ທະນາຄານທຸລະກິດ; ຂໍ້ຕົກລົງວ່າດ້ວຍການໃຫ້ບໍລິການຜະລິດຕະພັນຂອງທະນາຄານ; ຂໍ້ຕົກລົງວ່າດ້ວຍຕົວແທນຜູ້ຖືຮຸ້ນກູ້; ຂໍ້ຕົກລົງວ່າດ້ວຍການຄອບຄອງກິດຈະການ; ຂໍ້ຕົກລົງວ່າດ້ວຍການກຳນົດລາຄາຮຸ້ນ; ຂໍ້ຕົກລົງວ່າດ້ວຍການບັນຊີ ແລະ ການກວດສອບວຽກງານຫຼັກຊັບ ແລະ ຂໍ້ຕົກລົງວ່າດ້ວຍລະບົບເຕັກໂນໂລຊີຂໍ້ມູນ-ຂ່າວສານຂອງບໍລິສັດຫຼັກຊັບ;

– ສືບຕໍ່ຄົ້ນຄວ້າການສະເໜີຂໍອະນຸຍາດດຳເນີນທຸລະກິດຂອງ ສກຈບ ຈະເລີນຊັບນະຄອນ, ສກຈບ ໂຊກໄຊຊະນະ, ສກຈບ ອຸດົມຊັບ, ສກຈບ ພັນທະວີ ແລະ ສກຈບ ເມືອງລາວ;

– ກະກຽມຈັດກອງປະຊຸມຄະນະຮັບຜິດຊອບການຈັດຕັ້ງປະຕິບັດຄຳສັ່ງຂອງນາຍົກລັດຖະມົນຕີວ່າດ້ວຍການປະຢັດລາຍຈ່າຍງົບປະມານ ຢູ່ຂົງເຂດທະນາຄານ;

– ກະກຽມຈັດຝຶກອົບຮົມຮ່ວມຕະຫຼາດຫຼັກຊັບແຫ່ງປະເທດໄທ ໃນຫົວຂໍ້: "ວຽກງານຕະຫຼາດທຶນສຳລັບຊື່ມວນຊົນ";

– ກະກຽມການຈັດຕັ້ງເຜີຍແຜ່ດຳລັດ ແລະ ບົດແນະນຳກ່ຽວກັບການແຈ້ງຊັບສິນໃຫ້ພະນັກງານທົ່ວລະບົບທະນາຄານ;

– ສືບຕໍ່ວຽກງານປ້ອງກັນເວນຍາມຮັກສາຄວາມປອດໄພອາຄານສຳນັກງານໃຫ້ມີຄວາມສະຫງົບປອດໄພ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສ.ປ.ປ ລາວ
ຜູ້ວ່າການ

ດຣ ສົມພາວ ໄຟສິດ.

<u>ສົ່ງ:</u>
- ຄະນະຜູ້ວ່າການ ທຫລ.
- ຜູ້ຊ່ວຍຄະນະຜູ້ວ່າການ ທຫລ.
- ຫ້ອງວ່າການ ສູນກາງພັກ.
- ກົມຄົ້ນຄວ້າສັງລວມ, ສຳນັກງານປະທານປະເທດ.
- ກົມສັງລວມເສດຖະກິດ, ຫສນຍ.
- ຫ້ອງການກະຊວງແຜນການ ແລະ ການລົງທຶນ.
- ຫ້ອງການກະຊວງການເງິນ.
- ບັນດາກົມ ແລະ ທຽບເທົ່າກົມພາຍໃນ ທຫລ.
- ຄະນະຫ້ອງການ ທຫລ.
- ສຳເນົາ.